ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ເລກທີ: 1609 /ກລປ.

ນະຄອນຫລວງວຽງຈັນ, ວັນທີ 20 JUN 2019

ເຖິງ: ທ່ານ ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງປະຈຳແຂວງສາລະວັນ

ເລື່ອງ: ແຈ້ງການກ່ຽວກັບກໍລະນີ ກວດພົບເຊື້ອພະຍາດອະຫິວາໝູອາຟຣິກາ ຢູ່ເມືອງຕຸ້ມລານ ແຂວງສາລະວັນ

- ອີງໃສ່ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ ສະບັບປັບປຸງ ສະບັບເລກທີ 08/ສພຊ, ລົງວັນທີ 11.11.2016.
- ອີງໃສ່ດຳລັດວ່າດ້ວຍການກັນ ແລະ ການຄວບຄຸມພະຍາດສັດ ສະບັບເລກທີ 38/ລບ, ລົງວັນທີ 30 ມັງກອນ 2012.
- ອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ ເລກທີ 3824/ກປ, ລົງວັນທີ 18 ສິງຫາ 2017.
- ອີງໃສ່ການລາຍງານຂອງຂະແໜງລ້ຽງສັດ ແລະ ການປະມົງແຂວງສາລະວັນກ່ຽວກັບການລະບາດຂອງພະຍາດອະຫິວາໝູອາຟຣິກາ ຢູ່ເມືອງຕຸ້ມລານ ໃນວັນທີ 17 ມິຖຸນາ 2019.
- ອີງໃສ່ຜົນການວິໄຈກວດພົບເຊື້ອພະຍາດອະຫິວາໝູອາຟຣິກາ ຂອງສູນວິໄຈພະຍາດສັດ ກົມລ້ຽງສັດ ແລະ ການປະມົງ ໃນວັນທີ 17 ມິຖຸນາ 2019.

ກົມລ້ຽງສັດ ແລະ ການປະມົງ ຂໍຖືເປັນກຽດ ແຈ້ງມາຍັງທ່ານຊາບວ່າ: ໃນວັນທີ 17 ມິຖຸນາ 2019 ສູນວິໄຈ ພະຍາດສັດ, ກົມລ້ຽງສັດ ແລະ ການປະມົງ ໄດ້ກວດພົບເຊື້ອພະຍາດອະຫິວາໝູອາຟຣິກາ ຈຳນວນ 8 ຕົວຢ່າງທັງໝົດ ທີ່ສົ່ງມາຈາກ 7 ບ້ານ ທີ່ມີການລະບາດ ຄື: ບ້ານສາມັກຄີໄຊ, ດົບດາກ, ໂພນງາມ, ແກ້ງຮັງ, ນາລະຈາງ, ຫ້ວຍຫວ້າ ແລະ ບ້ານນາຮ່ອງໃຫ່ຍ ທີ່ຂຶ້ນກັບ ເມືອງຕຸ້ມລານ ແຂວງສາລະວັນ. ເຊື້ອພະຍາດອະຫິວາໝູອາຟຣິກາ ທີ່ກວດພົບຄັ້ງນີ້ ແມ່ນເປັນຄັ້ງທຳອິດ ທີ່ກວດພົບ ຢູ່ ສປປ ລາວ ແລະ ຜ່ານມາບໍ່ເຄີຍມີການລະບາດຂອງພະຍາດນີ້ເທື່ອ. ພະຍາດອະຫິວາໝູອາຟຣິກາ ເປັນພະຍາດທີ່ຮ້າຍແຮງ ສາມາດຕິດຕໍ່ໃສ່ໝູທຸກຊະນິດ ທຸກສາຍພັນ ທຸກອາຍຸ ແລະ ທຸກເພດໄວ ລວມທັງໝູປ່າ. ມີຄວາມທົນທານສູງຕໍ່ສະພາບແວດລ້ອມ ບໍ່ມີຢາກັນ ບໍ່ມີຢາປິ່ນປົວໂດຍກົງ ອັດຕາການຕາຍຂອງໝູທີ່ຕິດເຊື້ອພະຍາດນີ້ ສູງເຖິງ 100% ແຕ່ບໍ່ຕິດໃສ່ຄົນ.

ເພື່ອບໍ່ໃຫ້ພະຍາດ ແຜ່ລາມອອກສູ່ວົງກວ້າງ ແລະ ສົ່ງຜົນກະທົບດ້ານລົບ ຕໍ່ການຜະລິດໝູ ແລະ ການດຳລົງຊີວິດຂອງປະຊາຊົນ ມີຄວາມຈຳເປັນ ຕ້ອງໄດ້ພ້ອມກັນ ຕ້ານ ສະກັດກັ້ນ ແລະ ຕອບໂຕ້ພະຍາດໃຫ້ສະຫງົບລົງໂດຍໄວ, ກົມລ້ຽງສັດ ແລະ ການປະມົງ ຈຶ່ງແນະນຳ ໃຫ້ປະຕິບັດ ບາງມາດຕະການດ່ວນສຸກເສີນ ດັ່ງນີ້:

1. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ລາຍງານສະພາບການເກີດພະຍາດອະຫິວາໝູອາຟຣິກາ ແລະ ຂໍທິດຊີ້ນຳຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ, ພ້ອມທັງ ລົງສົມທົບກັບປະສານສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແຕ່ງຕັ້ງຄະນະສະເພາະກິດຕ້ານ ແລະ ຕອບໂຕ້ ພະຍາດອະຫິວາໝູອາຟຣິກາ ທີ່ເກີດຂຶ້ນນີ້ ພ້ອມທັງ ວາງແຜນກຽມຄວາມພ້ອມ

ເປັນຕົ້ນ: ກຳລັງຄົນ, ວັດຖຸປະກອນ, ພາຫະນະ ແລະ ງົບປະມານ ເພື່ອລົງເຄື່ອນໄຫວຕ້ານ ແລະ ຕອບໂຕ້ພະຍາດໃຫ້ທັນການ. ພ້ອມນີ້ ໃຫ້ສະເໜີ ຫາທ່ານເຈົ້າເມືອງ ປະກາດເຂດລະບາດຂອງພະຍາດໂດຍດ່ວນ.

2. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ອຳນາດການປົກຄອງບ້ານ, ລົງໂຄສະນາເຜີຍແຜ່ ໄປຮອດຄອບຄົວ ຂອງຜູ້ທີ່ໄດ້ຮັບຜົນກະທົບ ແລະ ຄອບຄົວອ້ອມຂ້າງໃກ້ຄຽງຂອງ 7 ບ້ານທີ່ໄດ້ຮັບຜົນກະທົບ ດ້ວຍໃຫ້ຕິດຕາມເຝົ້າລະວັງຢ່າງເຄັ່ງຄັດ, ສືບສວນ ສອບສວນພະຍາດ, ເກັບກຳຂໍ້ມູນສະພາບການລ້ຽງໝູ, ຈຳນວນໝູ ເຈັບ ຫຼື ຕາຍ ແລະ ກຳນົດຂອບເຂດລະບາດຂອງພະຍາດ. ພ້ອມທັງ ໃຫ້ນຳສະເໜີຕໍ່ ທ່ານເຈົ້າເມືອງ ເພື່ອປະກາດເປັນເຂດລະບາດຂອງພະຍາດອະຫິວາໝູອາຟຣິກາ ຢ່າງເປັນທາງການ ຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ ກຳນົດໄວ້.

3. ຕັ້ງຈຸດດ່ານກວດກາສັດຕະວະແພດຊົ່ວຄາວ ກວດຢຶດ ໝູ ແລະ ຜະລິດຕະພັນໝູ ທີ່ເຄື່ອນຍ້າຍຈາກເຂດລະບາດ ພ້ອມທັງຈັດຕັ້ງ ສີດພົ່ນຢາຂ້າເຊື້ອພາຫະນະ ທີ່ອອກຈາກເຂດດັ່ງກ່າວ ເພື່ອປ້ອງກັນບໍ່ໃຫ້ພະຍາດແຜ່ລາມ ໄປສູ່ບ້ານອື່ນ ຫຼື ສະຖານ ທີ່ອື່ນ.

4. ໃຫ້ຈັດຕັ້ງກັນ ລົງໂຄສະນາ ເຜີຍແຜ່ ໃຫ້ຄວາມຮູ້ ຄວາມເຂົ້າໃຈ ກ່ຽວກັບຄວາມອັນຕະລາຍຮ້າຍແຮງຂອງພະຍາດ ໃຫ້ແກ່ປະຊາຊົນພາຍໃນບ້ານ ແລະ ບ້ານອ້ອມຂ້າງ ພ້ອມທັງ ຊຸກຍູ້ ລະດົມ ໃຫ້ເຂົາເຈົ້າ ສະໝັກໃຈ ເຂົ້າຮ່ວມ ປະຕິບັດມາດຕະການ ຕອບໂຕ້ພະຍາດ ທີ່ລັດວາງອອກ ຢ່າງພ້ອມພຽງ.

5. ເຮັດແຜນສະເໜີ ຂໍອຸປະກອນ ເຊັ່ນ: ເຄື່ອງນຸ່ງປ້ອງກັນ PPE, ຢາຂ້າເຊື້ອ, ສີບມີ, ເກີບໂບກ,...ນຳກົມລ້ຽງສັດ ແລະ ການປະມົງ ເພື່ອໄປຮັບໃຊ້ໃນການໂຕ້ຕອບພະຍາດ ໂດຍດ່ວນ.

6. ຖ້າເປັນໄປໄດ້ ໃຫ້ຊຸກຍູ້ ລະດົມປະຊາຊົນ ແລະ ນຳພາ ຂ້າທຳລາຍໝູ ທີ່ຕິດເຊື້ອ ຫຼື ສ່ຽງຕໍ່ການຕິດເຊື້ອ ເປັນວົງແຄບຢູ່ຄອບຄົວ ຂອງເຂົາເຈົ້າ ຫຼື ຄອບຄົວໃກ້ຄຽງທີ່ສ່ຽງ ຫຼື ໄດ້ຮັບຜົນກະທົບ ດ້ວຍຄວາມສະໝັກໃຈ ເພື່ອຕັດວົງຈອນຂອງເຊື້ອພະຍາດ ແລະ ກຳຈັດໝູຕາຍ ແລະ ໝູຖືກຂ້າ ດ້ວຍການ ເຜົາ ຫຼື ຝັງ ໃຫ້ຖືກຕ້ອງ ຕາມຫຼັກວິຊາການ, ບໍ່ໃຫ້ນຳເອົາໝູທີ່ເຈັບ ຫຼື ຕາຍ ໄປບໍລິໂພກ ຫຼື ຖິ້ມລົງຫ້ວຍນ້ຳ ລຳເຊ ຫຼື ຕາມທຳມະຊາດ ຢ່າງເດັດຂາດ.

7. ນຳພາ ປະຊາຊົນເຮັດອະນາໄມ ແລະ ຂ້າເຊື້ອຄອກສັດ ສີດພົ່ນ ດ້ວຍຢາຂ້າເຊື້ອ ຫຼື ໂຮຍດ້ວຍປູນຂາວ ໃຫ້ທົ່ວເຖິງໃນບໍລິເວນບ້ານ ທີ່ໝູອາໄສຢູ່ ຫຼື ບ່ອນທີ່ໝູ ຍ່າງໄປມາແຕ່ລະມື້.

8. ໃຫ້ລາຍງານສະພາບການລະບາດຂອງພະຍາດ ແລະ ຄວາມຄືບໜ້າ ການປະຕິບັດມາດຕະການໂຕ້ຕອບພະຍາດ ໃຫ້ຂັ້ນເທິງຖັດຕົນ, ກົມລ້ຽງສັດ ແລະ ການປະມົງ ເປັນແຕ່ລະວັນ.

9. ປະຕິບັດມາດຕະການອື່ນ ຕາມກົດໝາຍ, ລະບຽບການ, ມາດຕະຖານ ແລະ ຂັ້ນຕອນການປະຕິບັດທາງດ້ານເຕັກນິກທີ່ເໝາະສົມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມລ້ຽງສັດ ແລະ ການປະມົງ.

ດຣ. ສີແສງ ຊຸບສີ